# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 03 ຕຸລາ 2021 (10-03-2021)

---

## ແນ່ໃຈໃນຄວາມຮັກຂອງພຣະເຈົ້າ

*ທ່ານໄດ້ເຫັນຄວາມຮັກຖືກສະແດງອອກແນວໃດ ເມື່ອບໍ່ດົນມານີ້?*

**ຈຸດສຳຄັນໃນບົດຮຽນ:** ຄວາມຮັກຂອງພຣະເຈົ້າໄດ້ປາກົດເຫັນ ໃນເມື່ອພວກເຮົາຮັກຄົນອື່ນເໝືອນດັ່ງທີ່ພຣະອົງໄດ້ຊົງຮັກພວກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ**: ສິ່ງນີ້ອາດຈະບໍ່ເປັນການແປກໃຈເລີຍ, ນັບຕັ້ງແຕ່ໂຣກຣະບາດໂຄວິດ-19 ໄດ້ຈັດລະດັບປ່ຽນແປງຕາຕະລາງລາຍການຂອງພວກເຮົາ. ພວກເຮົາໄດ້ປ່ຽນແປງຊ່ວງເວລາຍາວນານປານໃດທີ່ພວກເຮົາໃຊ້ໃນການເບິ່ງຈໍເຖິງຈະເປັນຈໍໂທຣະທັດ, ຈໍໂທຣະສັບມືຖື, ແລັບທອປ, ຫຼື ຄອມພິວເຕີ. ໃນນາມປະເທດຊາດ, ພວກເຮົາໃຊ້ເວລາຢ່າງຫຼວງຫຼາຍ ກັບອຸປກອນເຫຼົ່ານີ້. ໂດຍການນຳໃຊ້ທີ່ເພີ່ມຂຶ້ນນັ້ນ, ໄດ້ມີການເພີ່ມຂຶ້ນຂອງການສຳຜັດກັບ ຄຳເວົ້າທີ່ກຽດຊັງ, ແບ່ງແຍກ, ຄວາມໂມໂຫໂທໂສ,ຄວາມຮຸນແຮງ, ແລະ ຄວາມບໍ່ສງົບ ລົງໃນສື່ສັງຄົມຊຶ່ງເປັນຜົນສະທ້ອນຂອງຄວາມ ໂມໂຫໂທໂສ, ຄວາມຮຸນແຮງ, ແລະ ຄວາມບໍ່ສງົບຕໍ່ຊຸມຊົນຂອງພວກເຮົາ.

ບາງຄົນອາດຈະມີຄວາມງຶດງໍ້ອັສຈັນວ່າພຣະເຈົ້າຊົງສະຖິດຢູ່ແຫ່ງຫົນໃດໃນທຸກເວລານີ້? ບາງຄົນກໍຖືກທົດລອງໃຫ້ຖາມກ່ຽວ ກັບຄວາມດີ(ພຣະຄຸນ)ຂອງພຣະເຈົ້າ. ຢ່າງໃດກໍຕາມ, ການມີຄວາມກຽດຊັງແລະຄວາມຮຸນແຮງຂອງມະນຸດແມ່ນບໍ່ມີທາງລົບຄວາມດີແລະຄວາມຮັກຂອງພຣະເຈົ້າໄດ້. ຍິ່ງໄປກວ່ານັ້ນ, ແນວຄວາມຄິດຂອງໂລກກ່ຽວກັບຄວາມຮັກບໍ່ສາມາດປຽບທຽບກັບຄວາມຮັກຂອງພຣະເຈົ້າໄດ້. ຂ້າພະເຈົ້າໝາຍເຖິງຄວາມຮັກຂອງພຣະເຈົ້າທີ່ໄດ້ຊົງສະແດງອອກເມື່ອພຣະອົງຊົງໄດ້ປະທານພຣະບຸດອົງດຽວຂອງພຣະອົງໃຫ້ສິ້ນພຣະຊົນເທິງໄມ້ກາງແຂນເພື່ອບາບຂອງໂລກ. ພວກເຮົາບໍ່ສາມາດເຮັດຫຍັງໄດ້ເພື່ອສົມຄວນໄດ້ຮັບຄວາມຮັກຂອງພຣະອົງ, ແຕ່ພຣະອົງຍັງຊົງຮັກພວກເຮົາໃນທຸກວິຖີທາງ. ຄວາມຮັກຂອງພຣະເຈົ້າຊົງຍືນຍົງຢູ່ຕລອດຕລອດໄປ, ແລະ <u>*ພຣະອົງຊົງມີພຣະປະສົງໃຫ້ພວກເຮົາແນ່ໃຈໃນຄວາມຮັກຂອງພຣະອົງທີ່ມີຕໍ່ພວກເຮົາ.*</u>

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>1 ໂຢຮັນ 4:7-10</u>

*7ພວກທີ່ຮັກເອີຍ, ຈົ່ງໃຫ້ເຮົາທັງຫຼາຍຮັກເຊິ່ງກັນແລະກັນ ເພາະວ່າຄວາມຮັກມາຈາກພຣະເຈົ້າ ທຸກຄົນທີ່ຮັກກໍບັງເກີດມາຈາກ*
*ພຣະເຈົ້າແລະຮູ້ຈັກພຣະເຈົ້າ. 8ຜູ້ທີ່ບໍ່ຮັກກໍບໍ່ຮູ້ຈັກພຣະເຈົ້າ ເພາະວ່າພຣະເຈົ້າຊົງເປັນຄວາມຮັກ. 9ດ້ວຍຂໍ້ນີ້ແຫຼະ, ຄວາມຮັກ*
*ຂອງພຣະເຈົ້າສຳລັບເຮົາທັງຫຼາຍໄດ້ປາກົດແຈ້ງ ຄື ພຣະເຈົ້າໄດ້ຊົງໃຊ້ພຣະບຸດອົງດຽວຂອງພຣະອົງເຂົ້າມາໃນໂລກເພື່ອເຮົາ*
*ທັງຫຼາຍຈະໄດ້ມີຊີວິດດ້ວຍພຣະບຸດນັ້ນ. 10ຄວາມຮັກທີ່ເຮົາກ່າວເຖິງນີ້ແຫຼະ, ບໍ່ແມ່ນພວກເຮົາທັງຫຼາຍໄດ້ຮັກພຣະເຈົ້າ ແຕ່*

*ພຣະເຈົ້າໄດ້ຊົງຮັກພວກເຮົາ ແລະຊົງໃຊ້ພຣະບຸດຂອງພຣະອົງມາເພື່ອເປັນທາງຊົງຍົກຜິດບາບຂອງພວກເຮົາ.*

ອັຄສາວົກໂຢຮັນໄດ້ເວົ້າໄປແລ້ວສອງຄັ້ງໃນຫົວຂໍ້ຂອງຄວາມຮັກ (1 ຢຮ 2:7-11; 3:11-18). ມາບັດນີ້ລາວໄດ້ເວົ້າກ່ຽວກັບເຣື່ອງນີ້ອີກເປັນຄັ້ງທີ່ສາມ. ເມື່ອພຣະຄໍາພີກ່າວເຖິງເຣື່ອງນຶ່ງຊໍ້າແລ້ວຊໍ້າອີກ, ມັນສໍາຄັນ, ແຕ່ເມື່ອພຣະເຈົ້າຊົງດົນໃຈນັກຂຽນພຣະຄັມພີເພື່ອກ່າວເຖິງຫົວຂໍ້ນັ້ນຊໍ້າແລ້ວຊໍ້າອີກ, **<u>ພວກເຮົາຄວນຈະເອົາໃຈໃສ່ແທ້!</u>** ຄວາມຮັກແມ່ນທັມມະຊາດຂອງພຣະເຈົ້າ. ອັຄສາວົກໂຢຮັນໄດ້ຂຽນໄວ້ວ່າ: "*ຄວາມຮັກແມ່ນຈາກພຣະເຈົ້າ*" (ຂໍ້ 7) ແລະຄວາມຮັກມາຈາກພຣະເຈົ້າ "*ເພາະວ່າພຣະເຈົ້າຊົງເປັນຄວາມຮັກ*" (ຂໍ້ 8). ຄວາມຮັກບໍ່ເປັນພຽງແຕ່ຄຸນລັກສນະນຶ່ງ ຖ້າມກາງຫຼາຍລັກສນະ, ກົງກັນຂ້າມຄວາມຮັກແມ່ນ<u>ທັມມະຊາດ</u> ຂອງພຣະເຈົ້າຊຶ່ງຄຸນລັກສນະອື່ນໆດໍາເນີນໄປຈາກນັ້ນ...

ຊາວຄຣິສຕຽນສົມຄວນຈະຮູ້ວ່າພຣະເຈົ້າຊົງຮັກພວກເພິ່ນເພາະວ່າ "*ພຣະເຈົ້າໄດ້ຊົງໃຊ້ພຣະບຸດອົງດຽວຂອງ ພຣະອົງເຂົ້າມາໃນໂລກ* " (ຂໍ້ 9) ເພື່ອຊົງໄຖ່ໃຫ້ພົ້ນ. ພວກເຮົາໄດ້ເຫັນແລ້ວວ່າຕົ້ນກໍາເນີດຂອງຄວາມຮັກແມ່ນພຣະເຈົ້າ. ເພາະສະນັ້ນ, **<u>ພຣະຄຣິດເປັນການສະແດງອອກເຖິງຄວາມຮັກຂອງພຣະເຈົ້າ</u>**. ພຣະເຈົ້າໄດ້ສະແດງຄວາມຮັກຂອງພຣະອົງຕໍ່ພວກເຮົາໂດຍການສົ່ງພຣະບຸດຂອງພຣະອົງມາເພື່ອຊໍາລະໜີ້ບາບຂອງພວກເຮົາ. ຄວາມຮັກອັນຍິ່ງໃຫຍ່ຂອງພຣະເຈົ້າຖືກສັງເກດເຫັນໃນຄຸນຄ່າຂອງຂອງຂວັນ: ພຣະເຈົ້າຊົງປະທານ "<u>ພຣະບຸດອົງດຽວຂອງພຣະອົງ</u>". ຄໍາສັບພາສາ ກຣີກ(Greek) ທີ່ໃຊ້ໃນນີ້ສໍາລັບ "ພຣະບຸດອົງດຽວ" ແມ່ນ *ໂມໂນຍີນ (monogenes),* ແມ່ນຄໍາສັບດຽວທີ່ໃຊ້ບັລຍາຍການ ຖວາຍລູກຊາຍຄົນດຽວຂອງອັບຣາຮາມ-ອີຊາກ - (ຮຣ 11:17).

ພຣະເຈົ້າໄດ້ຊົງໄວ້ຊີວິດລູກຊາຍຂອງອັບຣາຮາມ, ແຕ່ພຣະອົງບໍ່ໄດ້ໄວ້ຊີວິດພຣະບຸດຂອງພຣະອົງເອງຢູ່ເທິງໄມ້ກາງແຂນ. ພຣະອົງ "ໄດ້ສົ່ງພຣະບຸດຂອງພຣະອົງມາເພື່ອເປັນເຄື່ອງບູຊາໄຖ່ບາບຂອງພວກເຮົາ" (ຂໍ້ 10). ພຣະເຈົ້າ ພຣະບິດາໄດ້ມີພຣະປະສົງໃຊ້ພຣະບຸດອົງດຽວຂອງພຣະອົງໃຫ້ມາສິ້ນພຣະຊົນເທິງໄມ້ກາງແຂນແທນພວກເຮົາ, ແລະອົງພຣະຄຣິດມີພຣະປະສົງຮັບເອົາການລົງໂທດສໍາລັບຄວາມບາບຂອງພວກເຮົາໂດຍພຣະອົງເອງ. ເນື່ອງຈາກພຣະເຈົ້າຊົງຮັກພວກເຮົາດ້ວຍວິທີນີ້, ພວກເຮົາຮູ້ວ່າພຣະອົງບໍ່ໄດ້ຊົງກັກສິ່ງດີໆຈາກພວກເຮົາໃນຖານະທີ່ພວກເປັນລູກຂອງ ພຣະອົງ. ***<u>ທ່ານສາມາດແນ່ໃຈໄດ້ໃນຄວາມຮັກຂອງພຣະເຈົ້າ!</u>***

*ທ່ານຈະຮູ້ແນວໃດວ່າພຣະເຈົ້າຊົງຮັກທ່ານ?*

## 2. <u>1 ໂຢຮັນ 4:11-13</u>

*11ພວກທີ່ຮັກເອີຍ, ຖ້າພຣະເຈົ້າໄດ້ຊົງຮັກເຮົາທັງຫຼາຍຢ່າງນັ້ນ ພວກເຮົາຄວນຈະຮັກຊຶ່ງກັນແລະກັນ. 12ຝ່າຍພຣະເຈົ້າບໍ່ມີໃຜໄດ້ເຫັນຈັກເທື່ອ ຖ້າພວກເຮົາທັງຫຼາຍຮັກຊຶ່ງກັນແລະກັນ ພຣະເຈົ້າກໍຊົງສະຖິດຢູ່ໃນເຮົາທັງຫຼາຍແລະຄວາມຮັກຂອງພຣະອົງກໍສົມບູນໃນພວກເຮົາ. 13ດັ່ງນີ້ແຫຼະ, ເຮົາທັງຫຼາຍຈຶ່ງຮູ້ວ່າພວກເຮົາຢູ່ໃນພຣະອົງ ແລະພຣະອົງຊົງສະຖິດຢູ່ໃນພວກເຮົາເພາະພຣະອົງໄດ້ຊົງໂຜດປະທານພຣະວິນຍານຂອງພຣະອົງແກ່ພວກເຮົາ.*

ພວກເຮົາໄດ້ເຫັນແລ້ວໃນຂໍ້ທີ່ 7 ພຣະດໍາຣັດໃຫ້ "ຮັກເຊິ່ງກັນແລະກັນ" ອັຄສາວົກໂຢຮັນໄດ້ເວົ້າຊໍ້າອີກສອງຄັ້ງໃນຂໍ້11-12. ໂດຍການຮຽກຮ້ອງໃຫ້ຮັກ, ຄວາມຮັບຜິດຊອບອັນຍິ່ງໃຫຍ່ກໍ່ຕາມມາ. ພວກເຮົາ**<u>ຕ້ອງ</u>**ຮັກຄົນອື່ນເໝືອນດັ່ງທີ່ພຣະເຈົ້າ<u>ໄດ້ຊົງ</u>ຮັກພວກເຮົາ. **<u>ພຣະເຈົ້າໄດ້ຊົງຮັກພວກເຮົາດ້ວຍຄວາມຮັກທີ່ປາສຈາກການປ່ຽນແປງແລະດ້ວຍການເສັຽສລະພຣະອົງເອງ</u>**. ພຣະເຈົ້າຍັງຊົງຮັກພວກເຮົາເໝືອນເດີມທຸກວັນນີ້,ແລະພຣະອົງຊົງສແວງຫາການສະແດງອອກຂອງຄວາມຮັກນັ້ນ<u>ໂດຍຜ່ານ</u>

ທາງພວກເຮົາ.

ເຖິງແມ່ນວ່າ "ຝ່າຍພຣະເຈົ້າບໍ່ມີໃຜໄດ້ເຫັນຈັກເທື່ອ" (ຂໍ້ 12) ຜູ້ທີ່ເຊື່ອເປີດເຜີຍພຣະເຈົ້າໂດຍຜ່ານວິທີທາງທີ່ພວກເຂົາເຈົ້າຮັກຊຶ່ງກັນແລະກັນ. ຂໍ້ເທັດຈິງທີ່ "**ພວກເຮົາຮັກກັນແລະກັນ**" ເປັນເຄື່ອງພິສູດວ່າ "**ພຣະເຈົ້າຍັງຊົງສະຖິດຢູ່ໃນພວກເຮົາ**".

ພວກເຮົາເຫັນຄວາມສົມບູນແບບ, ຄວາມສຳເລັດຄວາມຮັກ ໃນເມື່ອສິ່ງນີ້ເກີດຂຶ້ນ. ພວກເຮົາໂອບກອດຄວາມຮັກຂອງພຣະເຈົ້າ, ພຣະອົງຊົງສະເດັດມາສະຖິດຢູ່ໃນພວກເຮົາ ແລະຄວາມຮັກຂອງພຣະອົງຊົງຫຼັ່ງໄຫຼອອກຈາກພວກເຮົາໃນເມື່ອພວກເຮົາຮັກຄົນອື່ນ. ແລະການສະແດງຄວາມຮັກລະຫວ່າງອ້າຍເອື້ອຍນ້ອງໃນອົງພຣະຄຣິດສະແດງໃຫ້ເຫັນຄວາມຮັກຂອງພຣະເຈົ້າທີ່ມີຕໍ່ໂລກ. ພວກເຮົາຊີ້ໄປຫາພຣະຄຣິດ, ແລະບັນດາຜູ້ທີ່ຢູ່ອ້ອມຮອບພວກເຮົາກໍມີໂອກາດທີ່ຈະໂອບກອດຄວາມຮັກຂອງພຣະຄຣິດເຊັ່ນດຽວກັນ.

ກຸນແຈສຳຄັນໃນການຮັກຄົນອື່ນແມ່ນຢູ່ໃນການຮັກພຣະເຈົ້າ. ຍິ່ງເຮົາຮັກພຣະເຈົ້າຫຼາຍເທົ່າໃດ, ຄວາມຮັກຂອງພຣະເຈົ້າກໍຈະຍິ່ງຫຼັ່ງໄຫຼອອກຈາກພວກເຮົາໄປສູ່ຜູ້ອື່ນຫຼາຍຂຶ້ນເທົ່ານັ້ນ. ຄວາມຮັກຂອງພວກເຮົາທີ່ມີຕໍ່ຄົນອື່ນແມ່ນການພິສູດຄວາມຮັກຂອງພຣະເຈົ້າທີ່ມີຢູ່ໃນພວກເຮົາ. ຄວາມຮັກແມ່ນໝາກຜົນຂອງພຣະວິນຍານບໍຣິສຸດຊຶ່ງຊົງສະຖິດຢູ່ໃນພວກເຮົາ. **ພຣະເຈົ້າຊົງສົມບູນແບບໃນຄວາມຮັກຂອງພຣະອົງ.** ພຣະອົງບໍ່ຊົງຂາດເຂີນຫຍັງເລີຍ. ແຕ່ຄວາມຮັກຂອງພຣະເຈົ້າຈະ "**ເຮັດໃຫ້ເຕັມປ່ຽມ**" ໄດ້ກໍຕໍ່ເມື່ອຄວາມຮັກນັ້ນໄຫຼຜ່ານພວກເຮົາເທົ່ານັ້ນ. ພຣະອົງໄດ້ຊົງໃຊ້ ປະຊາກອນຂອງພຣະອົງໃຫ້ເປັນທໍ່ແຫ່ງຄວາມຮັກຂອງພຣະອົງ. ພວກເຮົາຕ້ອງຖວາຍຕົວເອງແດ່ພຣະອົງແຕ່ລະວັນໃຫ້ເປັນອຸປກອນ(ພາຊະນະ)ເພື່ອຄວາມຮັກອັນຕໍ່ເນື່ອງຂອງພຣະອົງ. ເຫດສະນັ້ນ, ໃນເມື່ອພວກເຮົາຮັກຄົນອື່ນ, ພວກເຮົາໄດ້ຮ່ວມມືກັບແຜນການໄຖ່ຖອນຂອງພຣະເຈົ້າສຳລັບຊາວໂລກເພື່ອໃຫ້ຄົນອື່ນໝັ້ນໃຈໃນຄວາມຮັກທີ່ພຣະເຈົ້າມີຕໍ່ເຂົາເຈົ້າ.

*ຄວາມຮັກຂອງພຣະເຈົ້າຊ່ວຍພວກເຮົາຮັກຄົນອື່ນໄດ້ໂດຍວິທີໃດ?*

## 3. 1 ໂຢຮັນ 4:19-21

*[19]ຝ່າຍເຮົາທັງຫຼາຍໄດ້ຮັກເພາະພຣະອົງໄດ້ຊົງຮັກພວກເຮົາກ່ອນ. [20]ຖ້າຜູ້ໃດເວົ້າວ່າ, "ຂ້າພະເຈົ້າຮັກພຣະເຈົ້າ" ແລະຍັງກຽດ*
*ຊັງພີ່ນ້ອງຂອງຕົນ ຜູ້ນັ້ນກໍເປັນຄົນເວົ້າຕົວະ ເພາະຜູ້ທີ່ບໍ່ຮັກພີ່ນ້ອງຂອງຕົນທີ່ຕາເຫັນແລ້ວ ກໍບໍ່ສາມາດຈະຮັກພຣະເຈົ້າທີ່*
*ຕາບໍ່ເຫັນນັ້ນ. [21]ຂໍ້ບັນຍັດນີ້ເຮົາທັງຫຼາຍກໍໄດ້ມາຈາກພຣະອົງ ຄືວ່າໃຫ້ຜູ້ທີ່ຮັກພຣະເຈົ້ານັ້ນ ຈົ່ງຮັກພີ່ນ້ອງຂອງຕົນເໝືອນກັນ.*

ອັຄສາວົກໂຢຮັນບໍ່ໄດ້ປະຖິ້ມຄຳເວົ້າໄວ້ໃນຄວາມມືດມົນ (ບໍ່ແຈ່ມແຈ້ງ), ທັງບໍ່ໄດ້ເຄືອບນ້ຳຕານ (ຍ້ອມສີ) ຄຳເວົ້າຂອງລາວ! ໝາຍຄວາມວ່າເພິ່ນເວົ້າຢ່າງກົງໄປກົງມາໂລດ: "*ຖ້າຜູ້ໃດເວົ້າວ່າ, 'ຂ້າພຣະເຈົ້າຮັກພຣະເຈົ້າ' ແລະຍັງກຽດຊັງພີ່ນ້ອງຂອງຕົນ ຜູ້ນັ້ນກໍເປັນຄົນເວົ້າຕົວະ*" (ຂໍ້ 20). ຄຣິສຕຽນທີ່ແທ້ຈິງຈະບໍ່ເຕັມໄປດ້ວຍຄວາມເຫັນແກ່ຕົວ, ຄວາມກຽດຊັງຕໍ່ອ້າຍເອື້ອຍນ້ອງໃນອົງພຣະຄຣິດ. ຄວາມເຊື່ອທີ່ນອກເໜືອໄປຈາກນີ້ແມ່ນເປັນການຂັດ (ກົງກັນຂ້າມ) ກັບຂ່າວປະເສີດ. ຄຣິສຕຽນທີ່ແທ້ຈິງບໍ່ສາມາດກຽດຊັງຜູ້ທີ່ເຊື່ອຄົນອື່ນເພາະວ່າພຣະວິນຍານບໍຣິສຸດຊົງສະຖິດຢູ່ໃນຕົນ. ມັນເປັນໄປບໍ່ໄດ້ແທ້ໆ! ການອ້າງເອົາຄວາມເຊື່ອໃນພຣະຄຣິດໃນຂະນະທີ່ເກັບຮັກສາຄວາມກຽດຊັງເປັນການດູຖູກພຣະລັກສນະຂອງພຣະເຈົ້າ. **ພຣະເຈົ້າຊົງເປັນຄວາມຮັກ.**

ເພື່ອເນັ້ນໜັກໃນຄວາມຈິງນີ້, ອັຄສາວົກໂຢຮັນໄດ້ເວົ້າວ່າ: "ເພາະຜູ້ທີ່ບໍ່ຮັກພີ່ນ້ອງຂອງຕົນທີ່ຕາເຫັນແລ້ວກໍບໍ່ສາມາດຈະຮັກພຣະເຈົ້າທີ່ຕາບໍ່ເຫັນນັ້ນ". ຄຳຖແລງການຢ່າງມີເຫດຜົນຂອງທ່ານໂຢຮັນແມ່ນແກ່ນແທ້ (ຫົວໃຈ) ຂອງບັນຫາ. ແນ່ນອນ, ບາງຄົນອາດຈະເວົ້າວ່າມັນເປັນການງ່າຍທີ່ຈະຮັກພຣະເຈົ້າເພາະເຫດວ່າ "**ພຣະເຈົ້າໄດ້ຊົງຮັກພວກເຮົາກ່ອນ**". ຢ່າງໃດກໍຕາມ

ທ່ານໂຢຮັນໄດ້ໂຕ້ຕອບດ້ວຍກົງກັນຂ້າມ ຄື: ຕາມຫຼັກເຫດຜົນແລ້ວ, *ການສະແດງຄວາມຮັກຕໍ່ຜູ້ຄົນທີ່ເຫັນໄດ້ຊັດເຈນໃນສາຍຕານັ້ນ ມັນເປັນການງ່າຍກວ່າ ການຮັກພຣະເຈົ້າຊຶ່ງຊົງເປັນພຣະວິນຍານ ທີ່ຕາສ່ອງບໍ່ເຫັນ*. (ຢຮ 4:24). ຄວາມລົ້ມເຫຼວທີ່ຈະຮັກຄົນທີ່ພວກເຮົາສາມາດມອງເຫັນໄດ້ແມ່ນຄວາມລົ້ມເຫຼວທີ່ຈະຮັກພຣະເຈົ້າຜູ້ທີ່ພວກເຮົາບໍ່ສາມາດເຫັນໄດ້. **ການລົ້ມເຫຼວໃນການຮັກແມ່ນການກຽດຊັງ.**

*ຢູ່ສະຖານທີ່ໃດທີ່ທ່ານເຫັນຫຼັກຖານສະແດງອອກເຖິງຄວາມກຽດຊັງໃນວັທນະທັມຂອງພວກເຮົາ?*

ຄວາມຮັກເອົາຊະນະຄວາມກຽດຊັງ. ດ້ວຍຄວາມກຽດຊັງຫຼາຍທີ່ສຸດຢູ່ໃນໂລກທຸກມື້ນີ້, ມັນເປັນສິ່ງສຳຄັນທີ່ສຸດ ທີ່ຊາວຄຣິສຕຽນຮັກກັນແລະກັນ. ແຕ່ຄວາມຮັກຂອງພວກເຮົາບໍ່ຄວນຢຸດຢູ່ກັບຄຣິສຕຽນຄົນອື່ນໆເທົ່ານັ້ນ. ຄວາມຮັກຕ້ອງອອກໄປສູ່ໂລກແລະສແວງຫາເອົາຊະນະບັນດາຜູ້ທີ່ສູນເສັຽໄປໃຫ້ກັບມາຫາພຣະຄຣິດ. ຈົ່ງຕັ້ງໃຈມຸ່ງໝັ້ນທີ່ຈະຮັກຄົນອື່ນເໝືອນດັ່ງອົງພຣະຄຣິດຊົງຮັກພວກເຮົາ ຄືພຣະອົງຜູ້ທີ່ໄດ້ຊົງສລະພຣະອົງເອງເພື່ອຄົນອື່ນຢ່າງບໍ່ເຫັນແກ່ຕົວ. **ຄວາມຮັກປະເພດນີ້ປ່ຽນແປງໂລກ. ຈົ່ງພາກັນມາຊ່ວຍຄົນອື່ນໃຫ້ແນ່ໃຈວ່າພຣະເຈົ້າມີຄວາມຮັກຕໍ່ເຂົາເຈົ້າ.**

*ກຸ່ມຂອງພວກເຮົາໄດ້ຊ່ວຍເຫຼືອພວກເຮົາຮຽນຮູ້ໃຫ້ມີຄວາມຄວາມຮັກດີຂຶ້ນກວ່າເກົ່າດ້ວຍວິທີໃດ?*

## ນຳໃຊ້ໃນຊີວິດ

ຄວາມຮັກຂອງພຣະເຈົ້າໄດ້ປາກົດໃຫ້ເຫັນໃນເມື່ອພວກເຮົາຮັກຄົນອື່ນເໝືອນດັ່ງທີ່ພຣະອົງໄດ້ຊົງຮັກພວກເຮົາ. ຈົ່ງເລືອກເອົານຶ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງກວດກາເບິ່ງຊີວິດຂອງທ່ານ.** ມີບັນດາຄົນໃນຊີວິດຂອງທ່ານທີ່ທ່ານມີບັນຫາທີ່ຈະຮັກ(ຮັກຍາກ)ຫຼືບໍ່? ຈົ່ງຈົດລາຍຊື່ແລະເລີ່ມຕົ້ນອະທິຖານເພື່ອພວກເຂົາເຈົ້າ.
- **ຈົ່ງຈັດເສັ້ນທາງຊີວິດຂອງທ່ານ.** ຈົ່ງທົບທວນເບິ່ງລາຍຊື່ການອະທິຖານນັ້ນ, ຈົ່ງຊອກຫາວິທີທາງເພື່ອສະແດງຄວາມຮັກໂດຍການຮັບໃຊ້ພວກເຂົາເຈົ້າ. ບັນທຶກກິຈກຳ, ເວລາ, ແລະສະຖານທີ່; ແລ້ວມອບໃຫ້ໃຜຜູ້ນຶ່ງເປັນຜູ້ກວດກາຄວາມຮັບຜິດຊອບຕໍ່ການກະທຳດ້ວຍຄວາມຮັກຂອງທ່ານ.
- **ຈົ່ງເຮັດໃຫ້ແຕກຕ່າງໃນຊີວິດຂອງໃຜຜູ້ນຶ່ງ.** ຈົ່ງນຳພາອາທິດນີ້ໃນການຊ່ວຍເຫຼືອກຸ່ມຂອງທ່ານເຮັດບາງສິ່ງແກ່ບາງຄົນທີ່ມີຄວາມຈຳເປັນ. ທ່ານສາມາດຈັດຕຽມສິ່ງຈຳເປັນແກ່ຄົນໄຮ້ທີ່ພັກພາອາສັຍ, ອາສາສມັກຮັບໃຊ້ກຸ່ມຈັດອາຫານທ້ອງຖິ່ນ, ຫຼືຊອກຫາຄອບຄົວທີ່ມີຄວາມຈຳເປັນແລະຮັບໃຊ້ພວກເພິ່ນ.

ໃນໂລກທຸກມື້ນີ້ມີຄວາມຖ່ອຍຮ້າຍຫຼາຍຢ່າງ. ແຕ່ນັ້ນແມ່ນມີຄວາມໝາຍວ່າມັນມີໂອກາດຫຼາຍທີ່ພວກເຮົາສາມາດສະແດງຄວາມຮັກຂອງພວກເຮົາໃຫ້ໄດ້ເຫັນ. **ຈົ່ງປ່ອຍຄວາມຮັກຂອງພຣະເຈົ້າໃຫ້ໄຫຼຜ່ານພວກເຮົາລົງສູ່ຄົນອື່ນໆສຳລັບພຣະຄຣິດ.**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://lsbf.us/ **ແປໂດຍ SSK**